# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 16 ພຶສຈິກາ 2008 (11-16-2008)

## ໜ້າທີ່ສຳຄັນຂອງຄຣິສຕຽນ

**ຂໍ້ພຣະຄັມພີໃນບົດຮຽນ:** ໂຣມ 13:1-14

**ບົດຮຽນນີ້ສາມາດສະທ້ອນຕໍ່ຊີວິດທ່ານໄດ້ຢ່າງໃດ ?**

ບົດຮຽນນີ້ແມ່ນຈະທ້າທາຍທ່ານໃຫ້ຝຶກຝົນການປະຕິບັດຕາມຄຳສອນຂອງອົງພຣະເຢຊູຄຣິດດ້ວຍການຍອມຢູ່ໃຕ້ບັງຄັບຂອງຜູ້ມີອຳນາດປົກຄອງ. ແລະຮັກເພື່ອນບ້ານພ້ອມທັງການຫຼີກລ້ຽງຈາກການກະທຳທີ່ບໍ່ເປັນຜົນດີແກ່ເພື່ອນບ້ານດ້ວຍການຍອມມອບທຸກຢ່າງໄວ້ກັບອົງພຣະຄຣິດ.

**ບົດຮຽນນີ້ເວົ້າກ່ຽວກັບຫຍັງ:**

ບົດຮຽນນີ້ໃຫ້ປັກໃຈເບິ່ງຄຳສອນຂອງໂປໂລ ເຖິງການປະຕິບັດຂໍ້ບັນຍັດຢ່າງຄົບຖ້ວນ ຂອງໄພ່ພົນຂອງພຣະເຈົ້າ - ໂດຍການຍອມຢູ່ໃຕ້ອຳນາດຂອງຜູ້ປົກຄອງ, ຮັກເພື່ອນບ້ານແລະປະຕິບັດຕົວດ້ວຍພຣະເຢຊູຄຣິດ.

**ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ:**

ມີຄົນຈຳນວນຫລວງຫລາຍໃຊ້ຊີວິດຕາມຄວາມປາດຖນາຂອງຕົວເອງ ເຂົາບໍ່ໃສ່ໃຈນຳສິ່ງໃດ ປະຕິເສດ ຫຼືປ່ອຍໄປຕາມແນວຄວາມຄິດຂອງເຂົາ. ເຂົາຊອກຫາຊ່ອງທາງທີ່ຈະບໍ່ຍອມຢູ່ໃຕ້ອຳນາດການປົກຄອງ ເຂົາບໍ່ສາມາດຈະເຮັດໄດ້ທັງບໍ່ເປັນຜົນດີໃຫ້ກັບເຂົາອີກ. ບົດຮຽນນີ້ຈະທ້າທາຍເຮົາ, " ຈະກະທຳຕາມທາງຂອງເຮົາຫຼືບໍ່ມີທາງ " ມັນຈະໄດ້ເປັນທີ່ພໍໃຈຂອງຜູ້ມີອຳນາດເພາະຜູ້ປົກຄອງນັ້ນເປັນຜູ້ຮັບໃຊ້ທີ່ພຣະເຈົ້າຕັ້ງໄວ້ໃຫ້ປະຕິບັດໃຫ້ເໝາະສົມແລະຍຶດໝັ້ນສັດທາໃນພຣະຄຣິດ ຈົນກວ່າວັນສະເດັດກັບມາຂອງພຣະອົງ.

ພໍ່ຂອງຂ້າພະເຈົ້າເປັນຄູສອນສາສນາຄຣິດ ເບິ່ງທ່ານຄືມີຄວາມໝັ້ນໃຈວ່າພຣະເຢຊູຄຣິດຈະກັບມາໃນໂລກໃນຂະນະລາວຍັງມີຊີວິດຢູ່. ໃນບາງເວລາມີຄົນຖາມເພິ່ນ " ຈະມີຫຍັງຈະເກີດຂຶ້ນຖ້າທ່ານເວົ້າຜິດ " ພໍ່ຂອງຂ້າພະເຈົ້າໃຫ້ຄຳຕອບວ່າ" ໃນການເບິ່ງຂອງຂ້າພະເຈົ້າແລ້ວແມ່ນຈະເປັນດັ່ງນັ້ນແທ້ໆ ຖ້າພຣະຄຣິດກັບມາໃນຂະນະຂ້າພະເຈົ້າມີຊີວິດຢູ່ຄືງເປັນໂຊກແທ້. ຂ້າພະເຈົ້າກໍຄືງພ້ອມແລະກໍບໍ່ແມ່ນເປັນການແປກປລາດອີກ ແຕ່ຖ້າພຣະອົງຍັງບໍ່ທັນກັບມາ. ຂ້າພະເຈົ້າຈຳຕ້ອງໃຊ້ຊີວິດໃຫ້ດີເທົ່າທີ່ຈະດີໄດ້ເພື່ອເປັນການຕຽມພ້ອມທີ່ຈະພົບກັບພຣະຄຣິດທຸກເວລາ.

ໃນບົດຮຽນນີ້ໂປໂລຊີ້ໃຫ້ເຫັນວ່າການຮັບຜິດຊອບຄົບຖ້ວນຂອງຄຣິສຕຽນຍອມຢູ່ໃຕ້ອຳນາດການປົກຄອງ.ໂຄຣົບສິດທິຂອງຜູ້ອື່ນແລະຕໍ່ຕົວເຮົາເອງ ເນື່ອງໃນເຫດຜົນນີ້ພວກເຮົາຄວນມີຄວາມພາກພຽນພະຍາຍາມເຮັດໃຫ້ປະສົບຜົນສຳເຣັດໃນຄວາມເປັນຄຣິສຕຽນຂອງເຮົາ ເພາະວ່າໃນຄາວສຸດທ້າຍຂອງພຣະຄຣິດນັ້ນໃກ້ຈະມາເຖິງແລ້ວ, ພຣະຄຣິດຈະກັບມາແນ່ນອນ.

## ສຶກສາພຣະຄັມພີ

**1. ຍອມຢູ່ໃຕ້ອຳນາດການປົກຄອງ:** (ໂຣມ 13:1–7)

ໃນບາງເວລາພວກເຮົາຮູ້ສຶກມີຄວາມຜິດຫວັງເມື່ອຮູ້ວ່າຜູ້ຮັບຕຳແໜ່ງການປົກຄອງນັ້ນເປັນທີ່ເຮົາບໍ່ມັກແລະລະບົບ

ແຜນການປົກຄອງກໍບໍ່ເໝາະຕາມໃຈຂອງເຮົາ. ເຖິງແມ່ນວ່າຜູ້ປົກຄອງບໍ່ແມ່ນມາຈາກການແຕ່ງຕັ້ງຂອງພຣະເຈົ້າ ແຕ່ລະບຽບການປົກຄອງແມ່ນມາຈາກພຣະເຈົ້າ. ໃນລະຫວ່າງເວລາຂອງພຣະບັນຍັດເກົ່າຄືໃນເມື່ອເວລາທີ່ບໍ່ມີລະບົບການປົກຄອງແບບກະສັດໃນເວລານັ້ນບໍ່ມີກະສັດປົກຄອງໃນປະເທດອິສຣາເອນທຸກຄົນແມ່ນເຮັດຕາມຊອບໃຈຂອງໃຜລາວ.( ຜູ້ປົກຄອງ 21 : 25) ພວກເຮົາຕ້ອງການໃຫ້ມີກະສັດປົກຄອງ.

ໂປໂລໄດ້ຂຽນໜັງສືໄປຍັງກຸງໂຣມ ໃນຂະນະເວລາປະວັດຕິສາດການປົກຄອງແມ່ນຢູ່ຫ່າງໄກຈາກຄວາມຖືກຕ້ອງ. ບໍ່ພຽງແຕ່ເທົ່ານັ້ນທ່ານຍັງໄດ້ເຕືອນສະຕິຜູ້ອ່ານຂອງເພິ່ນເຖິງພາກສ່ວນການປະຕິບັດຂອງຄຣິສຕຽນໃຫ້ເປັນພົລເມືອງທີ່ດີຍອມຢູ່ໃຕ້ອຳນາດຂອງຜູ້ທີ່ມີອຳນາດປົກຄອງ. ເພາະບໍ່ມີອັນໃດທີ່ບໍ່ມາຈາກພຣະເຈົ້າ ສະນັ້ນຜູ້ທີ່ຂັດຂືນອຳນາດນັ້ນກໍຂັດຂືນຜູ້ຊຶ່ງພຣະເຈົ້າແຕ່ງຕັ້ງມາ ແລະຜູ້ນັ້ນຈະຕ້ອງຖືກພິພາກສາລົງໂທດ. ເພາະວ່າຜູ້ປົກຄອງນັ້ນບໍ່ເປັນໜ້າຢ້ານສຳລັບຄົນທີ່ຮັກການດີ ແຕ່ເປັນໜ້າຢ້ານສຳລັບຄົນທີ່ບໍ່ຮັກການດີ ເຈົ້າບໍ່ຢາກຢ້ານຜູ້ທີ່ມີອຳນາດກໍຈົ່ງເຮັດແຕ່ການດີ ແລ້ວເຈົ້າກໍຈະໄດ້ເປັນທີ່ພໍໃຈຂອງຜູ້ທີ່ມີອຳນາດ. ຄຣິສຕຽນເຮົາມັກຈະຖາມກັນວ່າ ຖ້າຄະນະລັຖບານຫາກບໍ່ຮູ້ຈັກກັບພຣະເຈົ້າຫຼືບໍ່ມີພຣະເຈົ້າພວກເຮົາກໍຈະຍອມຢູ່ໃຕ້ອຳນາດຂອງພວກເພິ່ນຢູ່ບໍ່. ເຖິງຈະເປັນຢ່າງນັ້ນແຕ່ຜູ້ທີ່ເຊື່ອກໍສົມຄວນທີ່ຈະຍອມຢູ່ໃຕ້ອຳນາດນັ້ນ.( ກິຈການ 4: 13 – 20 ) ເມື່ອອຳນາດການປົກຄອງກີດກັ້ນບໍ່ໃຫ້ເຮັດຕາມພຣະບັນຊາຂອງພຣະເຈົ້າ ຫຼື ສິ່ງທີ່ພຣະເຈົ້າບໍ່ໃຫ້ເຮັດ. ສຳລັບຜູ້ທີ່ເຊື່ອຄວນຈະຮູ້ຈັກດີສຳລັບພຣະປະສົງຂອງພຣະເຈົ້າ( ມັດທາຍ 22:15–21 ) ໂປໂລໄດ້ຂຽນໜັງສືໄປຫາຕີໂມທຽວໃຫ້ເອົາໃຈໃສ່ໃນການອະທິຖານເພື່ອຜູ້ທີ່ມີອຳນາດເພາະເຮັດຢ່າງນັ້ນເປັນການດີແລະເໝາະສົມກັບທຸກຄົນ ( 1 ຕີໂມທຽວ 2:2–3 ) . ດັ່ງນັ້ນຄຣິສຕຽນມີໜ້າທີ່ຮັບຜິດຊອບໃນການອະທິຖານເພື່ອຄະນະລັຖບານຫຼືຜູ້ອື່ນອີກ.

## 2. <u>ຮັກເພື່ອນບ້ານ:</u> (ໂຣມ 13:8-10 )

ໂປໂລໄດ້ເຕືອນຜູ້ອ່ານຂອງເພິ່ນວ່າຢ່າເປັນໜີ້ສິ່ງໃດແກ່ໃຜນອກຈາກຄວາມຮັກເຊິ່ງມີຕໍ່ກັນ ເພາະວ່າຜູ້ທີ່ຮັກເພື່ອນບ້ານກໍປະຕິບັດຕາມພຣະບັນຍັດຢ່າງຄົບຖ້ວນແລ້ວ. ຂໍ້ 8 ໂປໂລໄດ້ບອກກັບຜູ້ອ່ານໃຫ້ມີໜ້າທີ່ຮັບຜິດຊອບຕໍ່ໜີ້ສິນທີ່ຕ້ອງຈ່າຍ ແຕ່ຕ້ອງຈ່າຍກົງເວລາແລະໃຫ້ກຽດກັບເຈົ້າໜີ້ ( ສຸພາສິດ 3:28 ) ຢ່າເວົ້າຕໍ່ເພື່ອນບ້ານຂອງເຈົ້າຈົ່ງໄປເຖີດ ແລະກັບມາໃນວັນໜ້າ ຂ້ອຍຈະຈ່າຍໃຫ້ກັບເຈົ້າ.

ພວກເຮົາມີໜ້າທີ່ຮັບຜິດຊອບ ແຕ່ບໍ່ເຄີຍປະຕິບັດ ເຊັ່ນເຣື່ອງຄວາມຮັກໃຫ້ກັບຄົນອື່ນ. ຄຳວ່າຄວາມຮັກແມ່ນພວກເຮົາເບິ່ງແບບເຜີນໆຢູ່ໃນສັງຄົມເຮົາ, ເຮົາຄວນຈະເຂົ້າໃຈຄວາມຮັກແທ້ ອີງຕາມພຣະຄຳ ( ໂຣມ 13:8–10) ແມ່ນຄວາມຮັກ “ ອະກາເປ ” ອະກາເປເປັນຄວາມຮັກທີ່ບໍ່ເຫັນແກ່ຕົວ. ຄວາມຮັກນີ້ແມ່ນແນໃສ່ຜູ້ອື່ນຫຼາຍກວ່າຕົນເອງ ເປັນຄວາມຮັກອັນສູງສົ່ງເໝືອນກັບພຣະເຢຊູຄຣິດໄດ້ສະລະພຣະອົງເປັນເຄື່ອງຖວາຍບູຊາເພື່ອຄວາມບາບຂອງພວກເຮົາ. ການທີ່ເຮົາຈະຮັກຄົນອື່ນບໍ່ແມ່ນຢູ່ໃນພື້ນຖານທີ່ຄົນອື່ນຈະເຮັດສິ່ງທີ່ດີອັນໃດອັນນຶ່ງຕໍ່ເຮົາ. ເຮົາຮັກຄົນອື່ນໄດ້ກໍແມ່ນຍ້ອນພຣະຄຸນແລະຄວາມຮັກຂອງພຣະເຈົ້າສະຖິດຢູ່ໃນເຮົາ.

ໂປໂລໄດ້ສລຸບໃນພຣະບັນຍັດສິບປະການໃນບາງຂໍ້ໄດ້ສລຸບວ່າ, ຮັກເພື່ອນບ້ານເໝືອນຮັກຕົວເອງ. ພຣະເຢຊູ, ໂປໂລແລະຜູ້ຂຽນພຣະທັມຢາໂກໂບກໍໄດ້ສລຸບໃຫ້ເຫັນວ່າພຣະບັນຍັດທີ່ຄົບຖ້ວນນັ້ນກໍແມ່ນ ຮັກເພື່ອນບ້ານເໝືອນຮັກຕົນເອງ. ( ມັດທາຍ 22:37–40; ຄາລາເຕັຽ 5:14; ຢາໂກໂບ 2:2–8 ) ນີ້ບໍ່ແມ່ນພຣະບັນຍັດໃໝ່ແຕ່ອີງຕາມ ( ພຣະທັມເລວີ 19:18) , ຢູ່ໃນຄຳອຸປະມາຂອງພຣະເຢຊູເຣື່ອງໄທຊາມາເຣັຽຜູ້ໃຈດີ. ພຣະເຢຊູໄດ້ບອກໃຫ້ເຮົາຢ່າງແຈ່ມແຈ້ງວ່າເພື່ອນບ້ານຂອງເຮົາແມ່ນຜູ້ທີ່ຕ້ອງການຄວາມຊ່ວຍເຫຼືອ ( ລູກາ 10 : 25 – 42 ) ພຣະເຢຊູຍັງບອກໃຫ້ເຮົາຢ່າງແຈ່ມແຈ້ງໃນເວລາເທສນາຢູ່ຈ້າຍພູ ( ມັດທາຍ 5–7 ) ການທີ່ຈະຂັບຕາມພຣະບັນຍັດຢ່າງຄົບຖ້ວນບໍ່ແມ່ນພຽງແຕ່ຈະປະຕິບັດຕາມ ແຕ່ໃຫ້ມີທັດສນະການປ່ຽນແປງການປະຕິບັດຕໍ່ພຣະເຈົ້າຢ່າງຖືກຕ້ອງ ດັ່ງນັ້ນອາຈານໂປໂລຈຶ່ງຢ້ຳອີກວ່າ ຄວາມຮັກຈຶ່ງເປັນການປະຕິບັດຕາມຂໍ້ບັນຍັດຢ່າງຄົບຖ້ວນ.

ໃນໜັງສືໂຣມ 7 ໂປໂລໄດ້ບອກຢ່າງແຈມແຈ້ງວ່າ ຜູ້ໃດຜູ້ນຶ່ງຈະສາມາດປະຕິບັດພຣະບັນຍັດຢ່າງຄົບຖ້ວນຈະເປັນໄປບໍ່ໄດ້ເພາະເຮົາເປັນຄົນບາບ. ເຖິງຢ່າງໃດກໍຕາມ ພຣະເຈົ້າໄດ້ເຮັດເພື່ອເຮົາແລ້ວໂດຍໄດ້ຊົງໃຊ້ພຣະບຸດຂອງພຣະອົງມາໃນສະພາບເນື້ອກາຍທີ່ຜິດບາບແລະເພື່ອຊົງໃຫ້ເຮົາຫລຸດພົ້ນຈາກຄວາມຜິດບາບເພື່ອໃຫ້ຄວາມຍຸດຕິທັມຂອງພຣະເຈົ້າໃຫ້ສຳເຣັດໃນຕົວຂອງພວກເຮົາທີ່ບໍ່ດຳເນີນຊີວິດຕາມຝ່າຍເນື້ອກາຍ ແຕ່ປະຕິບັດຕາມຝ່າຍພຣະວິນຍານ. ( ໂຣມ 8 : 3 – 4 ).

### 3. <u>ປະດັບຕົວດ້ວຍພຣະເຢຊູຄຣິດ</u> ( ໂຣມ 13:11–14 )

ໃນຂໍ້ທີ 11 ໂປໂລໄດ້ວາດຮູບພາບໃຫ້ພວກເຮົາເຫັນວ່າເປັນເວລາພວກເຮົາຄວນຈະຕື່ນຈາກຫລັບແລ້ວ. ຄຣິສຕຽນທຸກຄົນເຊື່ອວ່າເຂົາຈະຕ້ອງໄດ້ຮັບຊັຍຊະນະໃນວັນທີ່ພຣະເຢຊູຄຣິດສະເດັດກັບມາໃນຄັ້ງສຸດທ້າຍ. ແຕ່ວ່າຄວາມເຊື່ອບໍ່ໄດ້ມີການປ່ຽນແປງໃນການດຳເນີນຊີວິດຂອງເຂົາ. ດັ່ງນັ້ນໂປໂລຈຶ່ງເວົ້າວ່າເວລາທີ່ເຮົາຈະພົ້ນນັ້ນກໍໃກ້ກວ່າເວລາທີ່ເຮົາຫາກໍເຊື່ອນັ້ນ.

ໂປໂລຈຶ່ງບອກຄົນທີ່ເຊື່ອຈົ່ງໃຊ້ຊີວິດໃນຄວາມສວ່າງ ພຣະເຢຊູຄຣິດໄດ້ເວົ້າວ່າເຮົາເປັນແສງສວ່າງຂອງໂລກຜູ້ທີ່ຕາມເຮົາມາຈະບໍ່ຫຍ່ງວໄປທາງທີ່ມືດແຕ່ຈະມີຄວາມສວ່າງແຫ່ງຊີວິດ.

ພວກເຮົາຢ່າງຢູ່ໃນຄວາມສວ່າງມີຄວາມຫມາຍຂອງການໃຊ້ຊີວິດຢ່າງສຸພາບຮຽບຮ້ອຍ ໃນຂໍ້ທີ 13 ເພິ່ນໄດ້ບອກໃຫ້ຮູ້ວ່າການປະຕິບັດຕົນໃຫ້ສົມກັບເວລາກາງວັນເປັນວ່າການດຳລົງຊີວິດທີ່ດີຄືບໍ່ແມ່ນໃນການກິນລ້ຽງຢ່າງຊົ່ວຊ້າເສບສຸຣາຢາເມົາແລະບໍ່ແມ່ນການວິວາດເທິງສາກັນເຊິ່ງເປັນການດຳລົງຊີວິດຢູ່ໃນຄວາມມືດ ອີກອັນນຶ່ງ ການດຳລົງຊີວິດທີ່ຢູ່ໃນຄວາມສວ່າງແມ່ນການດຳລົງຊີວິດທີ່ເປີດເຜີຍ.

ຜູ້ທີ່ດຳເນີນຊີວິດໃນຄວາມສວ່າງຈະບໍ່ສະສົມໃນສິ່ງທີ່ບໍ່ດີໄວ້ ສຸດທ້າຍນີ້ໂປໂລໄດ້ເວົ້າວ່າປະດັບຕົວດ້ວຍພຣະເຢຊູຄຣິດນີ້ແມ່ນໂປໂລບໍ່ໄດ້ປະຕິເສດວ່າເຮົາຈະເຮັດທຸກສິ່ງຕາມຄວາມປາຖນາຂອງເນື້ອກາຍ ແຕ່ເມື່ອພວກເຮົາປະດັບຕົວດ້ວຍພຣະເຢຊູຄຣິດພວກເຮົາຈິ່ງມີຊັຍຕໍ່ຄວາມປາຖນານັ້ນ. ເພາະເຮົາໄດ້ຖວາຍຕົວເຮົາເອງຕໍ່ພຣະເຈົ້າ ເພາະສະນັ້ນຈຶ່ງເຮັດໃຫ້ເຮົາດຳເນີນຊີວິດຢູ່ໃນຄວາມສວ່າງໄດ້ ( 1 ເທຊະໂລນິກ 5 : 4-9 ) .

## <u>ບົດຮຽນແຫ່ງຊີວິດ</u>

ເປັນໄປໄດ້ບໍ່ຖ້າຜູ້ໃດຜູ້ນຶ່ງຈະໃຊ້ຊີວິດຢ່າງໂດດດ່ຽວ ຖ້າວ່າເຂົາຫາກມີຄວາມສາມາດພຽງພໍກັບວຽກງານຂອງເຂົາ ? ໂດຍສເພາະແລ້ວແມ່ນຢູ່ໃນວົງການ ການເມືອງເຮົາຈະໄດ້ຍິນການລົ້ມລະລາຍຂອງແຕ່ລະຄົນແລະເຮົາໄດ້ຮູ້ໄດ້ເຫັນວ່າມັນເປັນໄປບໍ່ໄດ້ໂດຍສະເພາະແລ້ວແມ່ນຢູ່ໃນພຣະຄຳຂອງພຣະເຈົ້າ. ຄຣິສຕຽນບໍ່ສາມາດໃຊ້ຊີວິດຢູ່ໂດດດ່ຽວ. ພວກເຮົາຜູ້ທີ່ຢູ່ໃນພຣະຄຣິດແມ່ນພຣະຄຣິດໄດ້ເປັນຜູ້ນຳພາໃນການດຳລົງຊີວິດຂອງເຮົາໃນທຸກທີ່ນທຸກແຫ່ງ. ດັ່ງນັ້ນພວກເຮົາຄວນເປັນພົລເມືອງທີ່ດີ. ພວກເຮົາຮັກເພື່ອນບ້ານຂອງເຮົາກໍເພາະພຣະເຈົ້າສະຖິດຢູ່ນຳເຮົາ.

ເຮັດແນວໃດຈຶ່ງຈະສແດງໃຫ້ເຮົາເຫັນວ່າພຣະຄຣິດມີພາກສ່ວນໃນການດຳລົງຊີວິດຂອງເຮົາ? ເຮົາສາມາດ…

- ❖ ອະທິຖານເພື່ອປະທານາທິບໍດີຜູ້ໃຫມ່.
- ❖ ສນັບສນູນຣັຖບານຂອງພວກເຮົາໂດບການອອກສຽງປ່ອນບັດແລະເວົ້າສິ່ງທີ່ຖືກຕ້ອງ.
- ❖ ສະແດງຄວາມຮັກຂອງເຮົາຕໍ່ເພື່ອນບ້ານໂດຍການກະທຳສິ່ງໃດສິ່ງນຶ່ງຕໍ່ລາວທີ່ເປັນການດີ.
- ❖ ຈົ່ງສຳຣວດຊີວິດຂອງທ່ານດ້ວຍຄວາມສັດຊື່ວ່າທ່ານປະດັບຕົວດ້ວຍພຣະເຢຊູຄຣິດແທ້ຫຼືບໍ່ ?

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by LLBC**